ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
INEWS ຂ່າວ
ທະນາຄານແຫ່ງ ສປປ ລາວ ສາຂາພາກເໜືອ ແຂວງຊຽງຂວາງ
ຖະໜົນ ເມືອງພວນ, ບ້ານ ໂພນສະຫວ່າງ, ເມືອງ ແປກ, ແຂວງ ຊຽງຂວາງ ໂທ: +856-61 260030-31 ແຟັກ: +856-61 260034

# ໜ່ວຍສະຫະພັນແມ່ຍິງ ທຫລ.ຊຂ ສະຫຼຸບການເຄື່ອນໄຫວວຽກງານ ແລະ ປາຖະກາຖາມູນເຊື້ອ ວັນສ້າງຕັ້ງສະຫະພັນແມ່ຍິງລາວ




ໜ່ວຍສະຫະພັນແມ່ຍິງ ທະນາຄານແຫ່ງ ສປປ ລາວ ສາຂາພາກເໜືອ ແຂວງຊຽງຂວາງ ໄດ້ຈັດກອງປະຊຸມ "ສະຫຼຸບຕີລາຄາຜົນການຈັດຕັ້ງປະຕິບັດວຽກງານ ໃນໄລຍະ 03 ປີຜ່ານມາ ແລະ ທິດທາງແຜນການໃນຕໍ່ໜ້າ ພ້ອມທັງປາຖະກາຖາມູນເຊື້ອວັນສ້າງຕັ້ງສະຫະພັນແມ່ຍິງລາວ ວັນທີ 20 ກໍລະກົດ 2020 ຄົບຮອບ 65 ປີ", ໃນວັນທີ 13 ສິງຫາ 2020 ທີ່ຫ້ອງປະຊຸມ ທະນາຄານແຫ່ງ ສປປ ລາວ ສາຂາພາກເໜືອ ແຂວງຊຽງຂວາງ, ໂດຍພາຍໃຕ້ການເປັນປະທານຂອງ ສະຫາຍ ນາງ ໜອມ ຫຼວງວິໄລ ຄະນະໜ່ວຍພັກ ຮອງຫົວໜ້າທະນາຄານແຫ່ງ ສປປ ລາວ ສາຂາພາກເໜືອ ແຂວງຊຽງຂວາງ ພ້ອມທັງເປັນປະທານສະຫະພັນແມ່ຍິງ ທຫລ.ຊຂ. ພ້ອມນີ້, ມີບັນດາສະຫາຍຄະນະໜ່ວຍກຳມະບານ, ຄະນະໜ່ວຍຊາວໜຸ່ມ ແລະ ບັນດາສະມາຊິກແມ່ຍິງ ທຫລ.ຊຂ ເຂົ້າຮ່ວມຢ່າງພ້ອມພຽງ.

ກອງປະຊຸມຄັ້ງນີ້ ສະຫາຍ ນາງ ພອນທິບ ເພັງໂສພາ ຄະນະ ປະທານກວດກາສະຫະພັນແມ່ຍິງ ທຫລ.ຊຂ ໄດ້ຂຶ້ນຜ່ານຕີລາຄາຜົນການຈັດຕັ້ງປະຕິບັດວຽກງານ ໃນໄລຍະ 03 ປີຜ່ານມາວ່າ: ໜ່ວຍສະຫະພັນແມ່ຍິງ ທຫລ.ຊຂ ແມ່ນໜ່ວຍໜຶ່ງທີ່ຂຶ້ນກັບ ສະຫະພັນແມ່ຍິງແຂວງ, ມີຄວາມຮັບຜິດຊອບໂດຍກົງຕໍ່ສະຫະພັນແມ່ຍິງແຂວງ ໃນການຈັດຕັ້ງປະຕິບັດໜ້າທີ່ການເມືອງ, ກົດລະບຽບ ແລະ ຂໍ້ແຂ່ງຂັນ 03 ດີ ຂອງສະມາຊິກແມ່ຍິງ ແລະ ໄດ້ຖືເອົາການສຶກສາອົບຮົມການເມືອງແນວຄິດໃຫ້ແກ່ສະມາຊິກແມ່ຍິງ

ເປັນບັນຫາຕົ້ນຕໍ, ເພື່ອໃຫ້ມີແນວຄິດອຸ່ນອຽນທຸ່ນທ່ຽງ, ເຊື່ອມຊຶມ ແລະ ຮັບຮູ້ເຖິງແນວທາງນະໂຍບາຍຕ່າງໆຂອງພັກ-ລັດ; ຫ້າວຫັນປະຕິບັດໜ້າທີ່ວຽກງານຕາມພາລະບົດບາດ, ຂອບເຂດສິດ, ໜ້າທີ່ ແລະ ຕາມການມອບໝາຍຢ່າງຕັ້ງໜ້າ, ເຄົາລົບນັບຖືການຈັດຕັ້ງ, ມີນ້ຳໃຈຮັບຜິດຊອບ, ປະຕິບັດລະບຽບວິໄນຢ່າງເຄັ່ງຄັດ, ພ້ອມທັງຍົກສູງຄວາມສາມັກຄີຊ່ວຍເຫຼືອເຊິ່ງກັນ ແລະ ກັນ.

ພ້ອມດຽວກັນນີ້, ກໍ່ໄດ້ຕີລາຄາດ້ານດີ-ດ້ານອ່ອນ ແລະ ບົດຮຽນທີ່ຖອດຖອນໄດ້ ຍ້ອນໜ່ວຍສະຫະພັນແມ່ຍິງ ທຫລ.ຊຂ ໄດ້ຮັບການໃກ້ສິດຕິດແທດ ແລະ ຊີ້ນຳໂດຍກົງຈາກ ຄະນະພັກ-ຄະນະນຳ ທຫລ.ຊຂ, ອຳນາດການປົກຄອງແຂວງທີ່ກ່ຽວຂ້ອງ, ບັນດາພະແນກອ້ອມຂ້າງ, ທີ່ໄດ້ອຳນວຍຄວາມສະດວກໃນວຽກງານດ້ານຕ່າງໆເປັນຢ່າງດີ, ສະມາຊິກແມ່ຍິງໜ່ວຍ ທຫລ.ຊຂ ມີຄວາມສາມັກຄີ ແລະ ເປັນເອກະພາບໃນການຈັດຕັ້ງປະຕິບັດພາລະບົດບາດ ແລະ ໜ້າທີ່ຕາມການມອບໝາຍຂອງຂັ້ນເທິງ, ຖືເອົາບັນດາມະຕິຄຳສັ່ງ, ທິດທາງແຜນການຂອງຄະນະພັກ, ຄະນະສາຂາ, ຄະນະສະຫະພັນແມ່ຍິງແຂວງເປັນບ່ອນອີງໃນການຈັດຕັ້ງປະຕິບັດ. ຈຶ່ງເຮັດໃຫ້ໜ່ວຍສະຫະພັນແມ່ຍິງ ທຫລ.ຊຂ ສາມາດເຄື່ອນໄຫວປະຕິບັດວຽກງານໄປໄດ້ດ້ວຍດີ, ມີຄວາມຄ່ອງຕົວ ແລະ ໄດ້ຮັບຜົນສຳເລັດໃນຫຼາຍດ້ານໃນໄລຍະຜ່ານມາ.



ຫຼັງຈາກນັ້ນ, ສະຫາຍ ນາງ ສຸລິຍາ ເລືອງພັນໄຊ ຮອງປະທານໜ່ວຍສະຫະພັນແມ່ຍິງ ທຫລ.ຊຂ ໄດ້ຂຶ້ນເລົ່າມູນເຊື້ອວັນສ້າງຕັ້ງສະຫະພັນແມ່ຍິງລາວ ຄົບຮອບ 65 ປີ ວັນທີ **20/07/1955-20/07/2020** ຄົບຮອບ **65** ປີ.

ໃນຕອນທ້າຍ ສະຫາຍປະທານກອງປະຊຸມ ໄດ້ຍ້ອງຍໍຊົມເຊີຍຕໍ່ກັບການຈັດຕັ້ງປະຕິບັດວຽກງານໃນໄລຍະຜ່ານມາ ພ້ອມທັງໂອ້ລົມຕໍ່ບັນດາສະມາຊິກແມ່ຍິງ ໃຫ້ມີຄວາມຮັບຜິດຊອບສູງຕໍ່ໜ້າທີ່ວຽກງານທີ່ໄດ້ຮັບມອບໝາຍ, ມີຄຸນສົມບັດ, ຄວາມບໍລິສຸດສັດຊື່ ແລະ ສືບຕໍ່ເອົາໃຈໃສ່ເຊື່ອມຊຶມບັນດາເອກະສານ, ຂໍ້ກຳນົດກົດລະບຽບ ແລະ ກົດໝາຍຕ່າງໆ, ເອົາໃຈໃສ່ໃກ້ສິດຕິດແທດ ແລະ ລົງຢ້ຽມຢາມສະມາຊິກ, ຕັ້ງໜ້າປະຕິບັດລະບຽບລັດຖະກອນ, ສືບຕໍ່ເອົາໃຈໃສ່ການສຳຫຼວດກວດກາ ແລະ ປ້ອງກັນປະກົດການຫຍໍ້ທໍ້ບໍ່ໃຫ້ເກີດຂຶ້ນ.

**ຂ່າວ: ສຸກສະຫວັນ ພົມມະວົງ**

**ພາບ: ຈັນສະໝອນ ພົມມະຈັກ**